ເພື່ອລາບ

4975

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2823 /ຫອຄ.ກຫຄວ

ນະຄອນຫຼວງວຽງຈັນ, ວັນທີ 26 ພະຈິກ 2018

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ
- ວິສາຫະກິດ ທີ່ໄດ້ຮັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລືນິຕິບຸກຄົນ)

**ເລື່ອງ:** ການຄວັດຕາປະທັບວິສາຫະກິດ ແລະ ປ້າຍຊື່ວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013;
- ອີງຕາມ ກົດໝາຍວ່າດ້ວຍປ້າຍ, ສະບັບປີ - 2018 ;
- ອີງຕາມ ດຳລັດ, ສະບັບເລກທີ 322/ລບ, ລົງວັນທີ 1 ຕຸລາ 2018, ວ່າດ້ວຍຕາປະທັບ ;
- ອີງຕາມ ຂໍ້ 7 (1.2.1) 1.2 (1) ຄຳສັ່ງ, ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018, ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ.

ເພື່ອໃຫ້ການຄວັດຕາປະທັບວິສາຫະກິດ ແລະ ປ້າຍຊື່ວິສາຫະກິດ ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ ຕາມເນື້ອໃນ ຈິດໃຈຂອງກົດໝາຍ ແລະ ລະບຽບການດັ່ງກ່າວ, ແນໃສ່ສ້າງບັນຍາກາດ "ການເລີ່ມຕົ້ນທຸລະກິດ" ໃຫ້ມີຄວາມສະດວກ ວ່ອງໄວ, ຫ້ອງການ, ກະຊວງອຸດສາຫະກຳ ແລະການຄ້າ ແຈ້ງມາຍັງພາກສ່ວນກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

**ກ. ການຄວັດຕາປະທັບ**

ພາຍຫລັງໄດ້ຮັບການຂຶ້ນທະບຽນວິສາຫະກິດແລ້ວ, ວິສາຫະກິດທີ່ກ່ຽວຂ້ອງສາມາດນຳເອົາໃບທະບຽນວິສາຫະກິດ ໄປຄວັດຕາປະທັບ ນຳຂະແໜງການປ້ອງກັນຄວາມສະຫງົບ ຕາມບົດບັນຍັດມາດຕາ 21(ໃໝ່) ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ-2013 ແລະ ມາດຕາ 22 ຂອງດຳລັດ, ສະບັບເລກທີ 322/ລບ, ລົງວັນທີ 1 ຕຸລາ 2018 ວ່າດ້ວຍຕາປະທັບ. ຫ້າມອອກໃບອະນຸຍາດຄວັດຕາປະທັບອີກ;

**ຂ. ປ້າຍຊື່ວິສາຫະກິດ**

1. ພາຍຫລັງທີ່ຜູ້ລົງທຶນໄດ້ຮັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ແລ້ວ ໃຫ້ນຳເອົາໃບທະບຽນວິສາຫະກິດ ໄປຜະລິດປ້າຍຊື່ວິສາຫະກິດ ໄດ້ເລີຍ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຜະລິດປ້າຍຊື່ວິສາຫະກິດ ດັ່ງທີ່ເຄີຍປະຕິບັດມາ.

2. ເນື້ອໃນປ້າຍຊື່ວິສາຫະກິດ ຕ້ອງປະກອບດ້ວຍ :

- ຊື່ວິສາຫະກິດ ຕາມທີ່ບົ່ງໄວ້ໃນໃບທະບຽນວິສາຫະກິດ;
- ເລກລະຫັດວິສາຫະກິດ;
- ເລກປະຈຳຕົວຜູ້ເສຍອາກອນ (ຖ້າມີ) ;
- ເບີໂທລະສັບທີ່ສາມາດຕິດຕໍ່ໄດ້.

ນອກຈາກເນື້ອໃນທີ່ກ່າວມາຂ້າງເທິງ, ວິສາຫະກິດສາມາດຕື່ມໂລໂກ ຫລື ຄິວອາໂຄດ (QR Code) ຂອງຕົນ ໃສ່ເບື້ອງຂວາດ້ານເທິງຂອງປ້າຍຊື່ວິສາຫະກິດ.

ທຸກຄັ້ງທີ່ມີການປ່ຽນແປງເນື້ອໃນທະບຽນວິສາຫະກິດ ທີ່ພາໃຫ້ມີການປ່ຽນແປງເນື້ອໃນປ້າຍຊື່ວິສາຫະກິດ, ວິສາຫະກິດທີ່ກ່ຽວຂ້ອງ ຕ້ອງຜະລິດປ້າຍຊື່ວິສາຫະກິດໃໝ່ໃຫ້ສອດຄ່ອງ.

3. ພາສາຕ່າງປະເທດ ທີ່ໃຊ້ໃນປ້າຍຊື່ວິສາຫະກິດ ຕ້ອງແມ່ນພາສາອັງກິດ ຕາມທີ່ລະບຸໃນໃບທະບຽນວິສາຫະກິດເທົ່ານັ້ນ. ການລະບຸພາສາລາວ ກັບພາສາອັງກິດ ໃນປ້າຍຊື່ວິສາຫະກິດນັ້ນ ຕ້ອງໃຫ້ພາສາລາວຢູ່ເທິງ, ພາສາອັງກິດຢູ່ລຸ່ມ ແລະ ຂະໜາດຕົວໜັງສືຂອງພາສາອັງກິດ ຕ້ອງບໍ່ໃຫ້ເກີນ ສອງສ່ວນສາມ (2/3) ຂອງຂະໜາດຕົວໜັງສືລາວ;

4. ຂະໜາດຂອງປ້າຍຊື່ວິສາຫະກິດ ຕ້ອງເໝາະສົມກັບສະຖານທີ່ປ້າຍຈະຕິດຕັ້ງ, ບໍ່ສ້າງຜົນກະທົບຕໍ່ທິວທັດທຳມະຊາດ, ສິ່ງແວດລ້ອມອ້ອມຂ້າງ, ມີຄວາມປອດໄພ, ບໍ່ເປັນອຸປະສັກຕໍ່ການສັນຈອນ, ແຕ່ ຂະໜາດນ້ອຍສຸດບໍ່ໃຫ້ລຸດ 30x60 ຊັງຕີແມັດ ແລະ ໃຫຍ່ສຸດ ບໍ່ເກີນ 1.5 ແມັດ x 3 ແມັດ;

5. ສີພື້ນ ແລະ ຕົວໜັງສືຂອງປ້າຍຊື່ລັດວິສາຫະກິດ ແມ່ນເປັນພື້ນສີຂາວ ຕົວໜັງສືສີແດງ, ແລະ ປ້າຍຊື່ວິສາຫະກິດຂອງເອກະຊົນ ແລະ ລວມໝູ່ (ສະຫະກອນ) ແມ່ນເປັນພື້ນສີເຫລືອງ ຕົວໜັງສືສີແດງ;

6. ປ້າຍຊື່ວິສາຫະກິດ ເປັນສັນຍາລັກບົ່ງບອກຂໍ້ມູນພື້ນຖານກ່ຽວກັບຕົວຕົນຂອງວິສາຫະກິດ ຕໍ່ສາທາລະນະຊົນ. ການຕິດຕັ້ງປ້າຍຊື່ວິສາຫະກິດ ຕ້ອງຕິດໄວ້ຢູ່ທາງດ້ານໜ້າຂອງທີ່ຕັ້ງສຳນັກງານ ຫລື ບ່ອນທີ່ວິສາຫະກິດຕັ້ງຢູ່ (ກໍລະນີວິສາຫະກິດຂະໜາດນ້ອຍ ທີ່ມີທີ່ຕັ້ງສຳນັກງານຢູ່ກັບສະຖານທີ່ເຮັດທຸລະກິດ ເຊັ່ນ: ຮ້ານຄ້າຂາຍຍ່ອຍ ເປັນຕົ້ນ);

7. ວິສາຫະກິດ ຕ້ອງເລືອກຮູບແບບເນື້ອໃນປ້າຍຊື່ວິສາຫະກິດ ຕາມຄວາມເໝາະສົມໃດໜຶ່ງ ຈາກສອງຮູບແບບເນື້ອໃນປ້າຍຊື່ວິສາຫະກິດທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ - ໂຣແມັງ I ແລະໂຣແມັງ II ຂອງແຈ້ງການສະບັບນີ້;

8. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ຕິດ ຫລືວາງເອກະສານຊ້ອນທ້າຍ - ໂຣແມັງ I ແລະ ໂຣແມັງ II ຕາມທີ່ກ່າວມາໃນຂໍ້ 7 ຂອງແຈ້ງການສະບັບນີ້ ໄວ້ໃນບ່ອນທີ່ສະດວກສຳລັບຜູ້ລົງທຶນ ໃນການຖ່າຍພາບ ຫລື ກອບປີ. ນອກຈາກນີ້ ຜູ້ລົງທຶນ ຫລື ຜູ້ທີ່ສົນໃຈ ສາມາດເຂົ້າເບິ່ງ ຫລື ດາວໂຫລດ ຈາກເວບໄຊ ຂອງກົມທະບຽນ ແລະຄຸ້ມຄອງວິສາຫະກິດ (www.erm.gov.la);

9. ແຈ້ງການສະບັບນີ້ ມີຜົນນຳໃຊ້ນັບແຕ່ວັນທີ 5 ທັນວາ 2018 ເປັນຕົ້ນໄປ ແລະປ່ຽນແທນແຈ້ງການ, ສະບັບເລກທີ 1542/ທອຄ.ກທຄວ, ລົງວັນທີ 21 ມິຖຸນາ 2018 ເລື່ອງ: ການຄວັດຕາປະທັບ ແລະປ້າຍຊື່ວິສາຫະກິດ.

ແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຫົວໜ້າຫ້ອງການ**

ກະຊວງອຸດສາຫະກຳ ແລະການຄ້າ
ຫ້ອງການ

ນ.ບານສະຕິ ເທບພະວົງ

**ບ່ອນສົ່ງ:**

- ຫ້ອງການ, ກະຊວງປ້ອງກັນຄວາມສະຫງົບ;
- ຫ້ອງການ, ກະຊວງຖະແຫລງຂ່າວ, ວັດທະນາທຳ ແລະທ່ອງທ່ຽວ;
- ຫ້ອງການ, ກະຊວງ ຍທຂ ;
- ພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

*ເອກະສານຊ້ອນທ້າຍ*

I. ຮູບແບບປ້າຍຊື່ວິສາຫະກິດເອກະຊົນ ແລະ ລວມໝູ່

ກ. ຮູບແບບປ້າຍຊື່ວິສາຫະກິດເອກະຊົນ ແລະ ລວມໝູ່ ທີ່ມີແຕ່ພາສາລາວ

ໂລໂກ້ (ຖ້າມີ)

ຄິວອາໂຄດ (ຖ້າມີ)

**(ຊື່ວິສາຫະກິດເປັນພາສາລາວ)**

.......................................................................

ເລກລະຫັດວິສາຫະກິດ: .......................................................................

ເລກປະຈຳຕົວຜູ້ເສຍອາກອນ:.......................................................

ໂທລະສັບ: ......................................., ແຟັກ: ..............................................

(ຕົວຢ່າງ 1) ຮູບແບບບໍ່ມີໂລໂກ ຫລື ຄິວອາໂຄດ

**ບໍລິສັດ ວັນອິນລາວ ບໍລິການທາງດ້ານກົດໝາຍ ຈຳກັດຜູ້ດຽວ**

ເລກລະຫັດວິສາຫະກິດ: 01-00021575

ເລກປະຈຳຕົວຜູ້ເສຍອາກອນ: 123456789988

ໂທລະສັບ: 021 416732, 020 59999272, ແຟັກ: 021 416732

(ຕົວຢ່າງ 2) ຮູບແບບມີໂລໂກ ຫລື ຄິວອາໂຄດ

**ບໍລິສັດ ວັນອິນລາວ ບໍລິການທາງດ້ານກົດໝາຍ ຈຳກັດຜູ້ດຽວ**

ເລກລະຫັດວິສາຫະກິດ: 01-00021575

ເລກປະຈຳຕົວຜູ້ເສຍອາກອນ: 123456789988

ໂທລະສັບ: 021 416732, 020 59999272, ແຟັກ: 021 416732

໒. ຮູບແບບປ້າຍຊື່ວິສາຫະກິດເອກະຊົນ ແລະ ລວມໝູ່ ທີ່ເປັນພາສາລາວ ແລະ ພາສາອັງກິດ

ໂລໂກ້
(ຖ້າມີ)

ຄິວອາໂຄດ
(ຖ້າມີ)

**(ຊື່ວິສາຫະກິດເປັນພາສາລາວ)**

..........................................................................

(ຊື່ວິສາຫະກິດເປັນພາສາອັງກິດ)

..................................................................................

ເລກລະຫັດວິສາຫະກິດ (Enterprise number): ..................................................

ເລກປະຈຳຕົວຜູ້ເສຍອາກອນ (Taxpayer Identification number): ...........................

ໂທລະສັບ (Telephone): ......................................., ແຟັກ(Fax):...........................

(ຕົວຢ່າງ 1) ຮູບແບບບໍ່ມີໂລໂກ ຫລື ຄິວອາໂຄດ

**ບໍລິສັດ ວັນອິນ ລາວ ບໍລິການທາງດ້ານກົດໝາຍ ຈຳກັດຜູ້ດຽວ**

ONE IN LAOS LEGAL SERVICE SOLE CO.,LTD

ເລກລະຫັດວິສາຫະກິດ (Enterprise number): 01-00021575

ເລກປະຈຳຕົວຜູ້ເສຍອາກອນ (Taxpayer Identification number): 123456789988

ໂທລະສັບ (Telephone): 021 416732, 020 59999272, ແຟັກ (Fax): 021 416732

(ຕົວຢ່າງ 2) ຮູບແບບມີໂລໂກ ຫລື ຄິວອາໂຄດ

**ບໍລິສັດ ວັນອິນລາວ ບໍລິການທາງດ້ານກົດໝາຍ ຈຳກັດຜູ້ດຽວ**

ONE IN LAOS LEGAL SERVICE SOLE CO.,LTD

ເລກລະຫັດວິສາຫະກິດ (Enterprise number): 01- 00021575

ເລກປະຈຳຕົວຜູ້ເສຍອາກອນ (Taxpayer Identification number): 123456789988

ໂທລະສັບ (Telephone): 021 416732, 020 59999272, ແຟັກ (Fax): 021 416732

## II. ຮູບແບບປ້າຍຊື່ລັດວິສາຫະກິດ

### ກ. ຮູບແບບປ້າຍຊື່ລັດວິສາຫະກິດ ທີ່ມີແຕ່ພາສາລາວ

ໂລໂກ້ (ຖ້າມີ)

ຄິວອາໂຄດ (ຖ້າມີ)

**(ຊື່ລັດວິສາຫະກິດເປັນພາສາລາວ)**

..........................................................................................

ເລກລະຫັດວິສາຫະກິດ: ..........................................................................

ເລກປະຈຳຕົວຜູ້ເສຍອາກອນ: ..................................................................

ໂທລະສັບ: ........................................., ແຟັກ: ...............................................

(ຕົວຢ່າງ 1) ຮູບແບບບໍ່ມີໂລໂກ ຫລື ຄິວອາໂຄດ

**ລັດວິສາຫະກິດຖືຮຸ້ນລາວ**

ເລກລະຫັດວິສາຫະກິດ: 01-00021575

ເລກປະຈຳຕົວຜູ້ເສຍອາກອນ: 123456789988

ໂທລະສັບ: 021 416732, 020 59999272, ແຟັກ: 021 416732

(ຕົວຢ່າງ 2) ຮູບແບບມີໂລໂກ ຫລື ຄິວອາໂຄດ

**ລັດວິສາຫະກິດຖືຮຸ້ນລາວ**

ເລກລະຫັດວິສາຫະກິດ: 01-00021575

ເລກປະຈຳຕົວຜູ້ເສຍອາກອນ: 123456789988

ໂທລະສັບ: 021 416732, 020 59999272, ແຟັກ: 021 416732

## ໒. ຮູບແບບປ້າຍຊື່ລັດວິສາຫະກິດ ທີ່ເປັນພາສາລາວ ແລະ ພາສາອັງກິດ

ໂລໂກ້ (ຖ້າມີ)

ຄິວອາໂຄດ (ຖ້າມີ)

**(ຊື່ລັດວິສາຫະກິດເປັນພາສາລາວ)**

.......................................................................

(ຊື່ລັດວິສາຫະກິດເປັນພາສາອັງກິດ)

.......................................................................

ເລກລະຫັດວິສາຫະກິດ(Enterprise number):............................................

ເລກປະຈຳຕົວຜູ້ເສຍອາກອນ(Taxpayer Identification number):...............................

ໂທລະສັບ(Telephone): 021 416732, 020 59999272, ແຟັກ (Fax): 021 416732

(ຕົວຢ່າງ 1) ຮູບແບບບໍ່ມີໂລໂກ ຫລື ຄິວອາໂຄດ

**ລັດວິສາຫະກິດຖືຮຸ້ນລາວ**

Lao Holding State Enterprise

ເລກລະຫັດວິສາຫະກິດ(Enterprise number): 01-00021575

ເລກປະຈຳຕົວຜູ້ເສຍອາກອນ(Taxpayer Identification number): 123456789988

ໂທລະສັບ(Telephone): 021 416732, 020 59999272, ແຟັກ (Fax): 021 416732

(ຕົວຢ່າງ 2) ຮູບແບບມີໂລໂກ ຫລື ຄິວອາໂຄດ

**ລັດວິສາຫະກິດຖືຮຸ້ນລາວ**

Lao Holding State Enterprise

ເລກລະຫັດວິສາຫະກິດ(Enterprise number): 01-00021575

ເລກປະຈຳຕົວຜູ້ເສຍອາກອນ(Taxpayer Identification number): 123456789988

ໂທລະສັບ(Telephone): 021 416732, 020 59999272, ແຟັກ (Fax): 021 416732